ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ຫ້ອງການ

ເລກທີ.1343.../ຫກ.6

ນະຄອນຫຼວງວຽງຈັນ, ວັນທີ 25 ກໍລະກົດ 2025

# ໜັງສືແຈ້ງເຊີນປະມູນ

1. ກະຊວງເຕັກໂນໂລຊີ ແລະ ການສື່ສານ ໂດຍຕາງໜ້າຫ້ອງການກະຊວງ ຕສ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ທີ່ດຳເນີນກິດຈະການດ້ານອຸປະກອນລະບົບຮັກສາຄວາມປອດໄພ, ກ້ອງວົງຈອນປິດ ເຂົ້າຮ່ວມປະມູນ ຈັດຊື້-ຈັດຈ້າງ ປັບປຸງລະບົບກ້ອງວົງຈອນປິດພາຍໃນ ຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ ປະຈຳປີ 2025. ເຊິ່ງກຳນົດມອບ-ຮັບສິນຄ້າ ພາຍໃນ 30ວັນ, ພາຍຫຼັງເຈົ້າຂອງໂຄງການອອກເອກະສານສັ່ງຊື້;
2. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ແລະ ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍທີ່ກ່ຽວພັນກັບການສະໜອງອຸປະກອນລະບົບຮັກສາຄວາມປອດໄພ, ລະບົບກ້ອງວົງຈອນປິດ;
4. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ໄດ້ທີ່ຫ້ອງການກະຊວງ ຕສ (ພະແນກ ເຕັກນິກສື່ສານພາຍໃນ), ຫ້ອງ 208 ຊັ້ນ 02, ທີ່ກະຊວງເຕັກໂນໂລຊີ ແລະ ການສື່ສານ (ເຂດສີສະເກດ), ເມືອງ: ຈັນທະບູລີ, ນະຄອນຫລວງວຽງຈັນ, ເບີໂທຕິດຕໍ່: 020 55580553, 021 21254243 ຈະເລີ່ມຂາຍຊອງແຕ່ວັນທີ 28 ກໍລະກົດ 2025 ເຖິງວັນທີ 01 ກັນຍາ 2025 (ໃນໂມງລັດຖະການ), ໃນລາຄາ 1,200,000 ກີບ/ຊອງ (ໜຶ່ງລ້ານສອງແສນກີບ), ຈຳນວນເງິນດັ່ງກ່າວນີ້ຈະບໍ່ໄດ້ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ 01 ກັນຍາ 2025 ທີ່ຫ້ອງ 208 ຊັ້ນ 02, ກະຊວງເຕັກໂນໂລຊີ ແລະ ການສື່ສານ (ເຂດສີສະເກດ), ເມືອງ: ຈັນທະບູລີ,ນະຄອນຫລວງວຽງຈັນ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ 09:00 ໂມງ ຂອງວັນທີ 01 ກັນຍາ 2025 ໂດຍສ່ອງໜ້າຄະນະການປະມູນ ແລະ ຕົວແທນຂອງຜູ້ປະມູນ;
6. ທຸກໆຊອງປະມູນຕ້ອງປະກອບການຄ້ຳປະກັນການປະມູນ ດ້ວຍເງິນສົດ ຫຼື ໜັງສືຄ້ຳປະກັນອອກໂດຍທະນາຄານ, ແຊັກ ບໍ່ໃຫ້ຫຼຸດ 2% (ສ່ວນຮ້ອຍ) ຂອງມູນຄ່າທີ່ສະເໜີ;

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບໍລິສັດ/ຫ້າງຮ້ານ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

ຫົວໜ້າຫ້ອງການ

ກະຊວງເຕັກໂນໂລຊີ ແລະ ການສື່ສານ
ຫ້ອງການ

ຈັນອິນ ສີທາລາດ